ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 316 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍຜູ້ພິພາກສາ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 067/ສພຊ, ລົງວັນທີ 10 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍຜູ້ພິພາກສາ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 031/ຄປຈ, ລົງວັນທີ 07 ທັນວາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍຜູ້ພິພາກສາ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 067 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 / 11 / 17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຜູ້ພິພາກສາ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຜູ້ພິພາກສາ ໃນວາລະກອງປະຊຸມຄັ້ງວັນທີ 10 ພະຈິກ 2017.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຜູ້ພິພາກສາ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 35 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 ພະຈິກ 2017

# ກົດໝາຍ
# ວ່າດ້ວຍຜູ້ພິພາກສາ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການເຄື່ອນໄຫວ, ການແຕ່ງຕັ້ງ, ການກຳນົດຊັ້ນ, ການເລື່ອນຊັ້ນ, ຂັ້ນເງິນເດືອນ, ເງິນອຸດໜູນ, ການຍົກຍ້າຍ, ການຕິດຕາມ ກວດກາ, ປະເມີນຜົນ ແລະ ການປົດຕຳແໜ່ງຜູ້ພິພາກສາ ເພື່ອຮັບປະກັນໃຫ້ຜູ້ພິພາກສາ ມີຄວາມຈົງຮັກພັກດີ, ມີຄຸນສົມບັດ ສິນທຳປະຕິວັດ, ມີຄວາມສັດຊື່ ບໍລິສຸດ, ມີຈັນຍາບັນ, ຈັນຍາທຳ ແນໃສ່ຮັບປະກັນການປະຕິບັດໜ້າທີ່ ໃນການພິຈາລະນາຕັດສິນ, ພິພາກສາຄະດີ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ, ຄົບຖ້ວນ, ພາວະວິໄສ, ປະກອບສ່ວນເຮັດໃຫ້ສັງຄົມ ມີຄວາມເປັນລະບຽບຮຽບຮ້ອຍ, ຍຸຕິທຳ, ສີວິໄລ ແລະ ປົກຄອງລັດດ້ວຍກົດໝາຍ.

**ມາດຕາ 2 ຜູ້ພິພາກສາ**

ຜູ້ພິພາກສາ ແມ່ນ ຜູ້ພິຈາລະນາຕັດສິນ ແລະ ພິພາກສາຄະດີ ໃນນາມລັດ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ພິພາກສາຊັ້ນສີ່ ໝາຍເຖິງ ຜູ້ພິພາກສາ ຂອງສານປະຊາຊົນສູງສຸດ ຫຼື ສານປະຊາຊົນທ້ອງຖິ່ນຕາມຄວາມເໝາະສົມ;
2. ຜູ້ພິພາກສາ ຊັ້ນສາມ, ຊັ້ນສອງ, ຊັ້ນໜຶ່ງ ໝາຍເຖິງ ຜູ້ພິພາກສາ ຂອງສານປະຊາຊົນທ້ອງຖິ່ນ;

3. **ສານປະຊາຊົນທ້ອງຖິ່ນ** ໝາຍເຖິງ ສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນຫຼວງ, ສານປະຊາຊົນເຂດ;

4. **ລະບົບສານປະຊາຊົນ** ໝາຍເຖິງ ສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;

5. **ຄະນະກຳມະການ** ໝາຍເຖິງ ຄະນະກຳມະການສອບເສັງ, ຄະນະກຳມະການຕິດຕາມກວດກາ, ຄະນະກຳມະການປະເມີນຜົນງານ;

6. **ການໄຕ່ສວນ** ໝາຍເຖິງ ການສອບຖາມຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໂດຍຄະນະສານໃນທີ່ປະຊຸມສານ;

7. **ຈັນຍາບັນ** ໝາຍເຖິງ ກົດການປະພຶດຕົນຂອງຜູ້ພິພາກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

8. **ສະພາຜູ້ພິພາກສາ** ໝາຍເຖິງ ຄະນະນຳຂອງສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ ປະທານ, ບັນດາຮອງປະທານ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາຈຳນວນໜຶ່ງ;

9. **ຄະນະປະທານ** ໝາຍເຖິງ ຄະນະນຳຂອງສານປະຊາຊົນທ້ອງຖິ່ນ ຊຶ່ງປະກອບດ້ວຍ ປະທານ, ບັນດາຮອງປະທານ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາຈຳນວນໜຶ່ງ;

10. **ຄະນະປະທານສານທະຫານ** ໝາຍເຖິງ ຄະນະນຳຂອງສານທະຫານຂັ້ນສູງ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າຄະນະສານອາຍາ ແລະ ຜູ້ພິພາກສາຈຳນວນໜຶ່ງ.

### ມາດຕາ 4 ນະໂຍບາຍຂອງລັດ ຕໍ່ຜູ້ພິພາກສາ

ລັດ ປົກປ້ອງ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນການປະຕິບັດໜ້າທີ່ ຂອງຜູ້ພິພາກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ສ້າງເງື່ອນໄຂໃຫ້ຜູ້ພິພາກສາ ໄດ້ຮັບການພັດທະນາທາງດ້ານການເມືອງ ແນວຄິດ, ຈັນຍາບັນ, ຈັນຍາທຳ, ຍົກລະດັບຄວາມຮູ້, ວິຊາສະເພາະ, ພາສາຕ່າງປະເທດ ແລະ ປະຕິບັດນະໂຍບາຍອຸດໜູນຢ່າງເໝາະສົມ ເພື່ອຍົກສູງຊີວິດການເປັນຢູ່ ຮັບປະກັນການປະຕິບັດໜ້າທີ່ໃຫ້ສຳເລັດ.

### ມາດຕາ 5 ຫຼັກການພື້ນຖານໃນການຄຸ້ມຄອງຜູ້ພິພາກສາ

ການຄຸ້ມຄອງຜູ້ພິພາກສາ ຕ້ອງຮັບປະກັນຫຼັກການພື້ນຖານ ດັ່ງນີ້:

1. ຖືກຕ້ອງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ນະໂຍບາຍຂອງລັດ;

2. ລວມສູນເປັນເອກະພາບ ໃນຂອບເຂດທົ່ວປະເທດ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບລະຫວ່າງຂະແໜງການ, ສູນກາງ ແລະ ທ້ອງຖິ່ນ;

3. ລວມສູນປະຊາທິປະໄຕ ປຶກສາຫາລື ຕົກລົງເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ ແລະ ຂັ້ນລຸ່ມຂຶ້ນກັບຂັ້ນເທິງ;

4. ສ້າງ ແລະ ພັດທະນາ ຜູ້ພິພາກສາ ໃຫ້ມີຄຸນນະພາບ, ຖືກຕ້ອງ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ;

5. ໂປ່ງໃສ, ຍຸຕິທຳ, ເປີດເຜີຍ, ພາວະວິໄສ ແລະ ສາມາດກວດສອບໄດ້;

6. ມີຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ບົນຫຼັກການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວທຸກເຜົ່າ.

ສຳລັບຫຼັກການໃນການດຳເນີນຄະດີຂອງຜູ້ພິພາກສາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີ ແພ່ງ, ອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ຜູ້ພິພາກສາ, ຄະນະກຳມະການ, ບຸກຄົນ ແລະ ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການຮ່ວມມື ກ່ຽວກັບວຽກງານຂອງຜູ້ພິພາກສາກັບຕ່າງປະເທດ, ພາກພື້ນ ແລະ ສາກົນດ້ວຍການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ, ການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານຂອງຜູ້ພິພາກສາໃຫ້ມີຄຸນນະພາບ ແລະ ຮັບປະກັນຄວາມຍຸຕິທຳ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຊັ້ນ, ມາດຕະຖານ ແລະ ການສອບເສັງ ຜູ້ພິພາກສາ
### ໝວດທີ 1
### ຊັ້ນ ແລະ ມາດຕະຖານ ຂອງຜູ້ພິພາກສາ

**ມາດຕາ 8 ຊັ້ນຜູ້ພິພາກສາ**

ຜູ້ພິພາກສາ ຈັດເປັນ ສີ່ ຊັ້ນ ດັ່ງນີ້:

1. ຜູ້ພິພາກສາ ຊັ້ນສີ່;
2. ຜູ້ພິພາກສາ ຊັ້ນສາມ;
3. ຜູ້ພິພາກສາ ຊັ້ນສອງ;
4. ຜູ້ພິພາກສາ ຊັ້ນໜຶ່ງ.

**ມາດຕາ 9 ຜູ້ພິພາກສາ ຊັ້ນສີ່**

ຜູ້ພິພາກສາ ຊັ້ນສີ່ ແມ່ນ ຜູ້ພິພາກສາ ທີ່ໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງທີ່ໄດ້ຜ່ານການສອບເສັງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

ມາດຕາ 10 ຜູ້ພິພາກສາ ຊັ້ນສາມ, ຊັ້ນສອງ ແລະ ຊັ້ນໜຶ່ງ

ຜູ້ພິພາກສາ ຊັ້ນສາມ ແລະ ຊັ້ນສອງ ແມ່ນ ຜູ້ພິພາກສາ ທີ່ໄດ້ຮັບການຕົກລົງເລື່ອນຊັ້ນຈາກຜູ້ພິພາກສາຊັ້ນໜຶ່ງ ຫຼື ຊັ້ນສອງ ຕາມລຳດັບ ໂດຍປະທານສານປະຊາຊົນສູງສຸດ ຕາມການເຫັນດີຂອງສະພາຜູ້ພິພາກສາ.

ຜູ້ພິພາກສາຊັ້ນໜຶ່ງ ໄດ້ຮັບການແຕ່ງຕັ້ງໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງທີ່ໄດ້ຜ່ານການສອບເສັງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

ມາດຕາ 11 ມາດຕະຖານລວມຂອງຜູ້ພິພາກສາ

ຜູ້ພິພາກສາ ມີມາດຕະຖານລວມ ດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກຳເນີດ ທີ່ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;
2. ມີຄວາມຈົງຮັກພັກດີ, ທັດສະນະຫຼັກໝັ້ນການເມືອງໜັກແໜ້ນ ແລະ ຮູ້ຈຳແນກມິດ-ສັດຕູຈະແຈ້ງ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນສູງ, ຮັກສາຄວາມລັບໄດ້ດີ, ບໍ່ເຊື່ອຟັງການບິດເບືອນ ພິກປີ້ນຄວາມຈິງ ຂອງຄູ່ຄວາມ ແລະ ບຸກຄົນອື່ນ;
3. ມີຄຸນສົມບັດ, ສັດຊື່ ບໍລິສຸດ, ທ່ຽງທຳ, ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ, ສະກັດກັ້ນ ແລະ ຕ້ານປາກົດການ ສວຍໂອກາດສໍ້ໂກງ, ຮັບ ຫຼື ໃຫ້ສິນບົນ, ໃຊ້ອຳນາດເກີນຂອບເຂດ ໃນການປະຕິບັດໜ້າທີ່;
4. ມີທັດສະນະເບິ່ງບັນຫາເລິກເຊິ່ງ, ຮອບຄອບ, ພາວະວິໄສ, ບໍ່ລຳອຽງ, ບໍ່ອະຄະຕິ ແລະ ຮູ້ວິໄຈ ໄຈ້ແຍກຂໍ້ມູນຫຼັກຖານຢ່າງຖືກຕ້ອງຊັດເຈນ ແລະ ທັນສະພາບການ, ມີຄວາມສະດຸ້ງໃຈ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະ ກ້າປັບປຸງແປງຈຸດອ່ອນຂອງຕົນ;
5. ມີລະດັບການສຶກສາກົດໝາຍແຕ່ຊັ້ນສູງ ຂຶ້ນໄປ, ໄດ້ຜ່ານການຝຶກອົບຮົມຕາມຫຼັກສູດ ສຳລັບຜູ້ພິພາກສາ, ຜ່ານການບຳລຸງທິດສະດີການເມືອງ-ການປົກຄອງ;
6. ບໍ່ເຄີຍຖືກລົງໂທດທາງອາຍາ ຍ້ອນການກະທຳຜິດ ໂດຍເຈດຕະນາ;
7. ສາມາດນຳໃຊ້ຄອມພິວເຕີ;
8. ຮູ້ພາສາຕ່າງປະເທດໃດໜຶ່ງ;
9. ມີສຸຂະພາບດີ.

ມາດຕາ 12 ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນສີ່

ຜູ້ພິພາກສາ ຊັ້ນສີ່ ນອກຈາກມີມາດຕະຖານລວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1. ມີອາຍຸແຕ່ ສີ່ສິບຫ້າປີ ຂຶ້ນໄປ;
2. ມີປະກາສະນີຍະບັດກົດໝາຍ ຊັ້ນປະລິນຍາຕີ ຂຶ້ນໄປ;
3. ມີຄວາມຮູ້ທາງດ້ານກົດໝາຍຢ່າງເລິກເຊິ່ງ, ມີບົດຮຽນ ແລະ ປະສົບການສູງ ໃນການດຳເນີນຄະດີ;
4. ມີບົດບາດ, ໄດ້ຮັບຄວາມເຊື່ອຖື ໄວ້ວາງໃຈ ຈາກການຈັດຕັ້ງ ແລະ ສັງຄົມ ໃນການປະຕິບັດໜ້າທີ່;
5. ມີຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງ ແຕ່ຊັ້ນສູງຂຶ້ນໄປ.

6. ໄດ້ຜ່ານການສອບເສັງ ເປັນຜູ້ພິພາກສາຊັ້ນສີ່.

**ມາດຕາ 13 ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນສາມ, ຊັ້ນສອງ ແລະ ຊັ້ນໜຶ່ງ**

ຜູ້ພິພາກສາ ຊັ້ນສາມ, ຊັ້ນສອງ ແລະ ຊັ້ນໜຶ່ງ ນອກຈາກມີມາດຕະຖານລວມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງກົດໝາຍສະບັບນີ້ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

ກ. ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນສາມ:

1. ມີອາຍຸແຕ່ ສີ່ສິບປີ ຂຶ້ນໄປ;
2. ເປັນຜູ້ພິພາກສາຊັ້ນສອງ ແຕ່ ຫ້າປີ ຂຶ້ນໄປ;
3. ມີຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງ ລະດັບຊັ້ນກາງຂຶ້ນໄປ;
4. ມີຄວາມຮູ້ທາງດ້ານກົດໝາຍຢ່າງເລິກເຊິ່ງ, ມີບົດຮຽນ ແລະ ປະສົບການສູງ ໃນການດຳເນີນຄະດີ;
5. ມີບົດບາດ, ໄດ້ຮັບຄວາມເຊື່ອຖື ໄວ້ວາງໃຈ ຈາກການຈັດຕັ້ງ ແລະ ສັງຄົມ ໃນການປະຕິບັດໜ້າທີ່.

ຂ. ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນສອງ:

1. ມີອາຍຸແຕ່ ສາມສິບຫ້າປີ ຂຶ້ນໄປ;
2. ເປັນຜູ້ພິພາກສາ ຊັ້ນໜຶ່ງ ແຕ່ ເຈັດປີ ຂຶ້ນໄປ;
3. ໄດ້ຮັບການບຳລຸງທາງດ້ານທິດສະດີການເມືອງ-ການປົກຄອງ.

ຄ. ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນໜຶ່ງ:

1. ມີອາຍຸ ແຕ່ ຊາວຫ້າປີ ຂຶ້ນໄປ;
2. ໄດ້ຜ່ານການສອບເສັງ ເປັນຜູ້ພິພາກສາຊັ້ນໜຶ່ງ.

## ໝວດທີ 2
## ການສອບເສັງເປັນຜູ້ພິພາກສາ

**ມາດຕາ 14 ການສອບເສັງເປັນຜູ້ພິພາກສາ**

ການສອບເສັງເປັນຜູ້ພິພາກສາ ມີ ສອງຄັ້ງ ຄື ການສອບເສັງເປັນຜູ້ພິພາກສາຊັ້ນໜຶ່ງ ແລະ ການສອບເສັງເປັນຜູ້ພິພາກສາຊັ້ນສີ່ ໂດຍມີຄະນະກຳມະການສອບເສັງ ເປັນຜູ້ຮັບຜິດຊອບ.

**ມາດຕາ 15 ເງື່ອນໄຂຂອງຜູ້ສອບເສັງ**

ຜູ້ສອບເສັງເປັນຜູ້ພິພາກສາຊັ້ນໜຶ່ງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຮັບການແຕ່ງຕັ້ງ ເປັນຜູ້ຊ່ວຍຜູ້ພິພາກສາ ແຕ່ ສາມ ຫາ ຫ້າ ປີ;
2. ມີໃບຢັ້ງຢືນການປະເມີນຜົນການປະຕິບັດໜ້າທີ່ ໃນການເປັນຜູ້ຊ່ວຍຜູ້ພິພາກສາ ໃນລະດັບດີ;
3. ມີຂໍ້ຕົກລົງ ຈາກປະທານສານປະຊາຊົນ ບ່ອນກ່ຽວຂ້ອງ ຕາມການເຫັນດີຂອງຄະນະປະທານ.

ຜູ້ສອບເສັງເປັນຜູ້ພິພາກສາ ຊັ້ນສີ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເຄີຍດຳລົງຕຳແໜ່ງ ປະທານ ຫຼື ຮອງປະທານສານປະຊາຊົນພາກ, ຮອງຫົວໜ້າສານທະຫານຂັ້ນສູງ, ຫົວໜ້າສານທະຫານພາກ, ປະທານສານປະຊາຊົນແຂວງ, ນະຄອນຫຼວງ ຫຼື ເປັນຜູ້ພິພາກສາຊັ້ນສາມ ຫ້າປີ ຂຶ້ນໄປ;

2. ມີໃບຢັ້ງຢືນການປະເມີນຜົນຂອງການປະຕິບັດໜ້າທີ່ ໃນລະດັບດີ;

3. ໄດ້ຮັບການສະເໜີຈາກຄະນະປະທານສານປະຊາຊົນ ບ່ອນກ່ຽວຂ້ອງ;

4. ໄດ້ຮັບການຕົກລົງຈາກປະທານສານປະຊາຊົນສູງສຸດ ຕາມການເຫັນດີຂອງສະພາຜູ້ພິພາກສາ.

**ມາດຕາ 16 ຄະນະກຳມະການສອບເສັງ**

ຄະນະກຳມະການສອບເສັງ ປະກອບດ້ວຍ:

ກ. ຄະນະກຳມະການສອບເສັງ ຜູ້ພິພາກສາຊັ້ນໜຶ່ງ ປະກອບດ້ວຍ:

1. ຮອງປະທານສານປະຊາຊົນສູງສຸດ ເປັນປະທານ;
2. ຫົວໜ້າກົມຈັດຕັ້ງ-ພະນັກງານ ສານປະຊາຊົນສູງສຸດ ເປັນຮອງປະທານ;
3. ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ສານປະຊາຊົນສູງສຸດ ເປັນກຳມະການ;
4. ຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ ສານປະຊາຊົນສູງສຸດ ເປັນກຳມະການ;
5. ຫົວໜ້າກົມກວດກາ ສານປະຊາຊົນສູງສຸດ ເປັນກຳມະການ;
6. ສະມາຊິກ ສະພາຜູ້ພິພາກສາ ຈຳນວນໜຶ່ງ ເປັນກຳມະການ.

ຄະນະກຳມະການສອບເສັງ ຜູ້ພິພາກສາຊັ້ນໜຶ່ງ ໄດ້ຮັບການແຕ່ງຕັ້ງຈາກປະທານສານປະຊາຊົນສູງສຸດ.

ຂ. ຄະນະກຳມະການສອບເສັງ ຜູ້ພິພາກສາຊັ້ນສີ່ ປະກອບດ້ວຍ:

1. ປະທານສານປະຊາຊົນສູງສຸດ ເປັນປະທານ;
2. ຮອງປະທານກຳມາທິການກົດໝາຍ ສະພາແຫ່ງຊາດ ເປັນຮອງປະທານ;
3. ຮອງປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ ເປັນກຳມະການ;
4. ຮອງລັດຖະມົນຕີ ກະຊວງຍຸຕິທຳ ເປັນກຳມະການ;
5. ຮອງລັດຖະມົນຕີ ກະຊວງພາຍໃນ ເປັນກຳມະການ;
6. ສະມາຊິກສະພາຜູ້ພິພາກສາ ຈຳນວນໜຶ່ງ ເປັນກຳມະການ.

ຄະນະກຳມະການສອບເສັງ ຜູ້ພິພາກສາຊັ້ນສີ່ ໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສອບເສັງ**

ຄະນະກຳມະການສອບເສັງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ແລະ ຄັດເລືອກຜູ້ສອບເສັງ;
2. ຄົ້ນຄວ້າເນື້ອໃນ ແລະ ອອກຫົວຂໍ້ສອບເສັງ;
3. ດຳເນີນການສອບເສັງ, ກວດບົດສອບເສັງ ແລະ ໃຫ້ຄະແນນ;
4. ລາຍງານ ແລະ ປະກາດຜົນການສອບເສັງ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງປະທານສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາແຫ່ງຊາດ.

## ພາກທີ III
## ການແຕ່ງຕັ້ງ, ສິດ ແລະ ໜ້າທີ່, ການເລື່ອນຊັ້ນ, ການປົດຕຳແໜ່ງ, ການຍົກຍ້າຍ ແລະ ການສັບປ່ຽນບ່ອນປະຈຳການ

### ໝວດທີ 1
### ການແຕ່ງຕັ້ງ, ສິດ ແລະ ໜ້າທີ່, ການເລື່ອນຊັ້ນ ແລະ ການປົດຕຳແໜ່ງ

**ມາດຕາ 18 ການແຕ່ງຕັ້ງ ຜູ້ພິພາກສາ**

ຜູ້ພິພາກສາຖືກແຕ່ງຕັ້ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຜູ້ພິພາກສາ ຊັ້ນໜຶ່ງ ຖືກແຕ່ງຕັ້ງເທື່ອດຽວ. ສຳລັບຜູ້ພິພາກສາ ຊັ້ນສອງ ແລະ ຊັ້ນສາມນັ້ນ ໄດ້ຮັບການເລື່ອນຊັ້ນ ຕາມລະບຽບການ.

ຜູ້ທີ່ໄດ້ຜ່ານການສອບເສັງເປັນຜູ້ພິພາກສາຊັ້ນສີ່ ຈະໄດ້ຮັບການແຕ່ງຕັ້ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຂັ້ນຕອນ, ການປະກອບເອກະສານ ການສະເໜີແຕ່ງຕັ້ງຜູ້ພິພາກສາ, ພິທີການປະກາດ ແລະ ການມອບມະຕິແຕ່ງຕັ້ງຜູ້ພິພາກສາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຂອງປະທານສານປະຊາຊົນສູງສຸດ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຜູ້ພິພາກສາ**

ຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດແຜນການຄົ້ນຄວ້າຄະດີ ທີ່ຕົນຮັບຜິດຊອບ;
2. ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ;
3. ຄົ້ນຄວ້າສຳນວນຄະດີທີ່ໄດ້ຮັບມອບໝາຍ;
4. ຕົກລົງໃຫ້ຈ່າສານອອກໝາຍຮຽກຄູ່ຄວາມ ຫຼື ຜູ້ເຂົ້າຮ່ວມອື່ນ ເຂົ້າມາໃຫ້ການ ແລະ ຊີ້ແຈງກ່ຽວກັບຄະດີ;
5. ເອົາຄຳໃຫ້ການຂອງຄູ່ຄວາມ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນການດຳເນີນຄະດີ;
6. ໄກ່ເກ່ຍ ຫຼື ທຳການສ້ອງໜ້າຄູ່ຄວາມໃນຄະດີ;
7. ຕົກລົງເລື່ອນ ຫຼື ໂຈະການດຳເນີນຄະດີ;
8. ອອກຄຳສັ່ງ, ຄຳຊີ້ຂາດ ຫຼື ນຳໃຊ້ມາດຕະການໃດໜຶ່ງ;
9. ນັ່ງເປັນຄະນະສານຕັດສີນຄະດີ;
10. ຂຽນຄຳຕັດສີນ, ຄຳພິພາກສາ ຄະດີທີ່ຕົນຮັບຜິດຊອບ;
11. ລົງລາຍເຊັນໃນຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສີນ, ຄຳພິພາກສາ ແລະ ນິຕິກຳອື່ນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
12. ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານຂອງຜູ້ພິພາກສາ;

13. ໄດ້ຮັບການປົກປ້ອງຕາມກົດໝາຍຈາກການຂົ່ມຂູ່, ທຳຮ້າຍຮ່າງກາຍ, ສຸຂະພາບ, ຊີວິດ ແລະ ກຽດສັກສີ ເນື່ອງຈາກການປະຕິບັດໜ້າທີ່ຂອງຕົນ;

14. ໄດ້ຮັບການແຕ່ງຕັ້ງ ໃຫ້ດຳລົງຕຳແໜ່ງບໍລິຫານໃດໜຶ່ງ ຂອງສານປະຊາຊົນແຕ່ລະຂັ້ນ;

15. ປົກປ້ອງຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 20 ການເລື່ອນຊັ້ນ**

ຜູ້ພິພາກສາ ຊັ້ນໜຶ່ງ ຖືກເລື່ອນເປັນຜູ້ພິພາກສາ ຊັ້ນສອງ ແລະ ຜູ້ພິພາກສາ ຊັ້ນສອງ ຖືກເລື່ອນເປັນຜູ້ພິພາກສາ ຊັ້ນສາມ ໂດຍປະທານສານປະຊາຊົນສູງສຸດ ຕາມການເຫັນດີຂອງສະພາຜູ້ພິພາກສາ.

**ມາດຕາ 21 ການປົດຕຳແໜ່ງຜູ້ພິພາກສາ**

ຜູ້ພິພາກສາ ຖືກປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

## ໝວດທີ 2
## ການຍົກຍ້າຍ ແລະ ການສັບປ່ຽນບ່ອນປະຈຳການ

**ມາດຕາ 22 ການຍົກຍ້າຍຜູ້ພິພາກສາ**

ຜູ້ພິພາກສາ ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່ໃນຂະແໜງການ ຫຼື ຂົງເຂດອື່ນ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ໃນກໍລະນີ ທີ່ຖືກຍົກຍ້າຍກັບຄືນນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້.

**ມາດຕາ 23 ການສັບປ່ຽນບ່ອນປະຈຳການຂອງຜູ້ພິພາກສາ**

ຜູ້ພິພາກສາ ຖືກສັບປ່ຽນບ່ອນປະຈຳການ ພາຍໃນລະບົບສານປະຊາຊົນ ໂດຍປະທານສານປະຊາຊົນສູງສຸດ.

## ພາກທີ IV
## ຈັນຍາບັນ, ຈັນຍາທຳ ແລະ ການຝຶກອົບຮົມ
### ໝວດທີ 1
### ຈັນຍາບັນ, ຈັນຍາທຳ ແລະ ຄວາມຮັບຜິດຊອບຂອງຜູ້ພິພາກສາ

**ມາດຕາ 24 ຈັນຍາບັນຂອງຜູ້ພິພາກສາ**

ຈັນຍາບັນຂອງຜູ້ພິພາກສາ ປະກອບດ້ວຍ:

1. ຈັນຍາບັນ ຕໍ່ຕົນເອງ;
2. ຈັນຍາບັນ ຕໍ່ອາຊີບ;
3. ຈັນຍາບັນ ຕໍ່ການຈັດຕັ້ງ;
4. ຈັນຍາບັນ ຕໍ່ປະຊາຊົນ ແລະ ສັງຄົມ.

ເນື້ອໃນລະອຽດແຕ່ລະຈັນຍາບັນ ຂອງຜູ້ພິພາກສາ ໃຫ້ປະຕິບັດຄືກັນກັບຈັນຍາບັນຂອງພະນັກງານ-ລັດຖະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 25 ຈັນຍາທຳ ຂອງຜູ້ພິພາກສາ**

ຜູ້ພິພາກສາ ຕ້ອງໃຫ້ຄວາມຍຸຕິທຳແກ່ຄູ່ຄວາມ, ປະຕິບັດໜ້າທີ່ດ້ວຍຄວາມຊື່ສັດ ບໍລິສຸດ, ທ່ຽງທຳ, ຖືກຕ້ອງຕາມກົດໝາຍ, ຕາມເຫດການຕົວຈິງຂອງຄະດີ ແລະ ຕ້ອງປະຕິບັດໜ້າທີ່ວຽກງານຢ່າງເຂັ້ມງວດ, ຮອບຄອບ, ຄົບຖ້ວນ, ພາວະວິໄສ ຕາມກົດໝາຍ, ຍຶດໝັ້ນໃນກຽດສັກສີ ຂອງສະຖາບັນຕຸລາການ, ຫຼີກເວັ້ນອະຄະຕິສີ່ປະການ ຄື ການລຳອຽງ ເພາະຄວາມຮັກ ຄວາມໂກດ, ຄວາມໂລບ, ຄວາມຫຼົງ ແລະ ຄວາມຢ້ານກົວ. ພ້ອມດຽວກັນນີ້ ຜູ້ພິພາກສາ ຍັງຕ້ອງມີການປະພຶດທີ່ດີ ແລະ ມີຄວາມອົດທົນສູງ.

**ມາດຕາ 26 ຄວາມຮັບຜິດຊອບຂອງຜູ້ພິພາກສາ ໃນການດຳເນີນ ແລະ ພິຈາລະນາຕັດສິນຄະດີ**

ໃນການດຳເນີນ ແລະ ພິຈາລະນາຕັດສິນຄະດີ ຜູ້ພິພາກສາ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຮັບປະກັນການພິຈາລະນາຕັດສິນຄະດີ ທີ່ຕົນຮັບຜິດຊອບນັ້ນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ເຫດການຕົວຈິງ;
2. ນຳໃຊ້ມາດຕະການທາງກົດໝາຍ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດຂອງລັດ, ຂອງສັງຄົມ ຫຼື ຂອງຄູ່ຄວາມ;
3. ຮັບຜິດຊອບຕໍ່ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ທີ່ຕົນອອກ ຊຶ່ງບໍ່ຖືກຕ້ອງຕາມກົດໝາຍ ໂດຍເຈດຕະນາ;
4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການຝຶກອົບຮົມຜູ້ພິພາກສາ

**ມາດຕາ 27 ການຝຶກອົບຮົມ**

ການຝຶກອົບຮົມ ມີ ສາມ ປະເພດ ດັ່ງນີ້:

1. ການຝຶກອົບຮົມຂັ້ນພື້ນຖານ;
2. ການຝຶກອົບຮົມປົກກະຕິ;
3. ການຝຶກອົບຮົມບໍ່ປົກກະຕິ.

**ມາດຕາ 28 ການຝຶກອົບຮົມຂັ້ນພື້ນຖານ**

ຜູ້ພິພາກສາຊັ້ນໜຶ່ງ ທີ່ໄດ້ຮັບການແຕ່ງຕັ້ງໃໝ່ ຕ້ອງໄດ້ຮັບການຝຶກອົບຮົມ ຄວາມຮູ້ຂັ້ນພື້ນຖານກ່ຽວກັບລະບຽບ ແລະ ໜ້າທີ່ວຽກງານທີ່ຕົນຈະໄດ້ປະຕິບັດ ໂດຍສະເພາະຂັ້ນຕອນການຄົ້ນຄວ້າສຳນວນຄະດີ, ການປະກອບຫຼັກຖານ, ການຊັ່ງຊາຕີລາຄາຫຼັກຖານ, ການກະກຽມຂັ້ນບັນລັງຕັດສິນຄະດີ, ຂັ້ນຕອນການໄຕ່ສວນ ແລະ ການຄວບຄຸມການດຳເນີນຄະດີໃນທີ່ປະຊຸມສານ, ການລົງຄຳເຫັນໃນຫ້ອງປະຊຸມລັບ, ການຂຽນຄຳຕັດສິນ ແລະ ການປະກາດຄຳຕັດສິນໃນທີ່ປະຊຸມສານ.

ການຝຶກອົບຮົມນັ້ນ ຕ້ອງດຳເນີນໄປພ້ອມກັບການບຳລຸງທິດສະດີການເມືອງ-ການປົກຄອງ.

**ມາດຕາ 29 ການຝຶກອົບຮົມປົກກະຕິ**

ຜູ້ພິພາກສາ ຕ້ອງໄດ້ຮັບການຝຶກອົບຮົມ ກ່ຽວກັບນິຕິກຳ, ກົດໝາຍທີ່ສ້າງໃໝ່ ຫຼື ປັບປຸງ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ການຝຶກອົບຮົມປົກກະຕິ ດຳເນີນຕາມແຜນການ ແລະ ຫຼັກສູດ ທີ່ໄດ້ກຳນົດໄວ້ ຊຶ່ງຈັດຂຶ້ນຢູ່ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ຂອງສານປະຊາຊົນສູງສຸດ ຫຼື ຢູ່ສານປະຊາຊົນທ້ອງຖິ່ນ.

**ມາດຕາ 30 ການຝຶກອົບຮົມບໍ່ປົກກະຕິ**

ການຝຶກອົບຮົມບໍ່ປົກກະຕິ ຈັດຂຶ້ນເພື່ອພັດທະນາຄຸນນະພາບ ໃນຫົວຂໍ້ໃດໜຶ່ງທີ່ຈຳເປັນ ເພື່ອຍົກສູງຄຸນນະພາບສະເພາະດ້ານຂອງຜູ້ພິພາກສາ.

## ພາກທີ V
## ເງິນເດືອນ ແລະ ເງິນອຸດໜູນ

**ມາດຕາ 31 ເງິນເດືອນ ແລະ ເງິນອຸດໜູນຕຳແໜ່ງບໍລິຫານ**

ເງິນເດືອນ ຂອງຜູ້ພິພາກສາ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ເງິນອຸດໜູນ ຕຳແໜ່ງບໍລິຫານຂອງຜູ້ພິພາກສາ ໃຫ້ປະຕິບັດຕາມລະບຽບການຂອງລັດຖະບານ.

ສຳລັບ ເງິນເດືອນ ແລະ ເງິນອຸດໜູນ ຕຳແໜ່ງບໍລິຫານ ຂອງຜູ້ພິພາກສາ ສານທະຫານ ໃຫ້ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 32 ເງິນອຸດໜູນວິຊາຊີບ ຂອງຜູ້ພິພາກສາ**

ຜູ້ພິພາກສາຂອງສານປະຊາຊົນ ໄດ້ຮັບເງິນອຸດໜູນວິຊາຊີບ ໂດຍການຕົກລົງຂອງລັດຖະບານ ຊຶ່ງຖືກຮັບຮອງໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 33 ຂໍ້ຫ້າມ ສຳລັບຜູ້ພິພາກສາ**

ຫ້າມຜູ້ພິພາກສາ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ສິດອຳນາດ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ໝູ່ຄູ່, ພັກພວກ ຫຼື ຍາດພີ່ນ້ອງ;
2. ບັງຄັບ ນາບຂູ່, ປະຕິບັດສິດ, ໜ້າທີ່ເກີນຂອບເຂດ ຫຼື ລະເມີດລະບຽບການດຳເນີນຄະດີ;
3. ລຳອຽງ ຫຼື ເຂົ້າຂ້າງ ອອກຊາ ທີ່ພາໃຫ້ມີການຕັດສິນ ຫຼື ພິພາກສາຄະດີ ບໍ່ມີຄວາມຍຸຕິທຳ;
4. ກັກສຳນວນຄະດີ, ກົດໜ່ວງເອກະສານ ເພື່ອຫາຜົນປະໂຫຍດ;
5. ເປີດເຜີຍຄວາມລັບ ກ່ອນການຕັດສິນ ຫຼື ພິພາກສາຄະດີ;
6. ທວງ, ຮຽກ, ໃຫ້ ຫຼື ຮັບເອົາສິນບົນ;
7. ເປັນທີ່ປຶກສາທາງດ້ານກົດໝາຍ, ພົວພັນກັບຄູ່ຄວາມ ເພື່ອຫາຜົນປະໂຫຍດ;
8. ປົກບັງ, ຊຸກເຊື່ອງເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ;
9. ສ້າງກຸ່ມກ້ອນ, ເຄືອຂ່າຍ ແລະ ກະທຳສິ່ງໃດສິ່ງໜຶ່ງ ທີ່ພາໃຫ້ການພິຈາລະນາຕັດສິນຄະດີ ບໍ່ຖືກຕ້ອງ, ເປັນທຳ;
10. ຫຼິ້ນການພະນັນ, ໄພສັງຄົມ ແລະ ດື່ມສິ່ງມຶນເມົາ ໃນໂມງລັດຖະການ;
11. ມີພຶດຕິກຳອື່ນ ທີ່ຜິດຕໍ່ຈັນຍາບັນ, ຈັນຍາທຳ ແລະ ເປັນການລະເມີດກົດໝາຍ.

**ມາດຕາ 34 ຂໍ້ຫ້າມ ສຳລັບຄະນະກຳມະການ**

ຫ້າມຄະນະກຳມະການ ມີພຶດຕິກຳ ດັ່ງນີ້:

1. ລຳອຽງ, ເຂົ້າຂ້າງ ອອກຊາ, ບິດເບືອນຄວາມຈິງ, ປົກປິດຂໍ້ມູນຄວາມຈິງ, ຮຽກຮ້ອງຜົນປະໂຫຍດ ຫຼື ຮັບສິນບົນ;
2. ແຊກແຊງ, ກ້າວກ່າຍ, ຂັດຂວາງ ການດຳເນີນ ຫຼື ການພິຈາລະນາຕັດສິນຄະດີ;
3. ຂົ່ມຂູ່, ທຳຮ້າຍ ຜູ້ພິພາກສາ;
4. ມີການກະທຳ ທີ່ພາໃຫ້ຜູ້ພິພາກສາ ຕັດສິນຄະດີ ບໍ່ມີຄວາມເປັນທຳ;
5. ໝິ່ນປະໝາດ, ໃສ່ຮ້າຍ ຜູ້ພິພາກສາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 35 ຂໍ້ຫ້າມ ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ແຊກແຊງ, ກົດດັນ ແລະ ຂັດຂວາງ ການດຳເນີນ ແລະ ການພິຈາລະນາຕັດສິນຄະດີ;
2. ຂົ່ມຂູ່, ທຳຮ້າຍ ຜູ້ພິພາກສາ;
3. ມີການກະທຳ ທີ່ພາໃຫ້ການຕັດສິນຄະດີ ບໍ່ໄດ້ຮັບຄວາມເປັນທຳ;
4. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ຜູ້ພິພາກສາ;
5. ປົກປິດ, ເຊື່ອງອຳ, ທຳລາຍຫຼັກຖານ ທີ່ກ່ຽວຂ້ອງກັບຄະດີ ຫຼື ປົກປ້ອງຜູ້ກະທຳຜິດ;
6. ປົກຍ້າຍຜູ້ພິພາກສາ ຂອງສານປະຊາຊົນໂດຍບໍ່ມີມະຕິ ຂອງຄະນະປະຈຳສະພາແຫ່ງຊາດ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການປົກປ້ອງຜູ້ພິພາກສາ
### ໝວດທີ 1
### ການຄຸ້ມຄອງຜູ້ພິພາກສາ

**ມາດຕາ 36 ການຄຸ້ມຄອງຜູ້ພິພາກສາ**

ຜູ້ພິພາກສາ ຊັ້ນສີ່ ໄດ້ຮັບການຄຸ້ມຄອງ ໂດຍຄະນະປະຈຳສະພາແຫ່ງຊາດ.

ສຳລັບຜູ້ພິພາກສາ ຊັ້ນສາມ, ຊັ້ນສອງ ແລະ ຊັ້ນໜຶ່ງ ໄດ້ຮັບການຄຸ້ມຄອງໂດຍສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ກະຊວງປ້ອງກັນປະເທດ.

ການຄຸ້ມຄອງຜູ້ພິພາກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 37 ການຮັບຕຳແໜ່ງ ຂອງຜູ້ພິພາກສາຄືນໃໝ່**

ຜູ້ພິພາກສາທີ່ໄດ້ຖືກຍົກຍ້າຍໄປປະຈຳການຢູ່ຂະແໜງການອື່ນ ເມື່ອກັບຄືນມາປະຈຳການຢູ່ສານປະຊາຊົນນັ້ນ ຈະໄດ້ຮັບຮອງການເປັນຜູ້ພິພາກສາຄືນໃໝ່ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ບົນພື້ນຖານການສະເໜີຂອງປະທານສານປະຊາຊົນສູງສຸດ ດ້ວຍການເຫັນດີຂອງສະພາຜູ້ພິພາກສາ ໂດຍບໍ່ຈຳເປັນຕ້ອງຜ່ານການສອບເສັງອີກ.

ການຮັບຕຳແໜ່ງຜູ້ພິພາກສາຄືນໃໝ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບການທຽບຊັ້ນ, ຂັ້ນເງິນເດືອນ ຂອງຜູ້ກ່ຽວ ໃຫ້ປະຕິບັດຕາມມາດຕາ 31 ແລະ 32 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການປົກປ້ອງຜູ້ພິພາກສາ

**ມາດຕາ 38 ການປົກປ້ອງຜູ້ພິພາກສາ**

ຜູ້ພິພາກສາຂອງສານປະຊາຊົນ ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ.

ຜູ້ພິພາກສາ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ, ກັກຂັງ ຖ້າຫາກບໍ່ໄດ້ຮັບການເຫັນດີ ຈາກຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມແຕ່ລະກໍລະນີ.

ໃນກໍລະນີ ຈັບຕົວ, ກັກຕົວ, ກັກຂັງ ຜູ້ພິພາກສາ ທີ່ກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຕ້ອງລາຍງານປະທານສານປະຊາຊົນທີ່ກ່ຽວຂ້ອງ ເພື່ອລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ ໃນທັນທີເພື່ອຂໍຄຳເຫັນກ່ຽວກັບການດຳເນີນຄະດີ ໃນຂັ້ນຕໍ່ໄປ; ສຳລັບການຈັບຕົວ, ກັກຕົວ, ກັກຂັງ ຜູ້ພິພາກສາ ທີ່ປະຈຳ ການຢູ່ສານປະຊາຊົນສູງສຸດ ຕ້ອງລາຍງານປະທານສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາແຫ່ງຊາດ.

ສຳລັບການຈັບຕົວ, ກັກຕົວ, ກັກຂັງ ຜູ້ພິພາກສາຂອງສານທະຫານນັ້ນ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຕ້ອງລາຍງານປະທານສານທະຫານທີ່ກ່ຽວຂ້ອງ, ປະທານສານທະຫານທີ່ກ່ຽວຂ້ອງ ຕ້ອງລາຍງານລັດຖະມົນຕີກະຊວງປ້ອງກັນປະເທດ ແລະ ຂັ້ນເທິງທີ່ກ່ຽວຂ້ອງ.

**ມາດຕາ 39 ການດຳເນີນຄະດີ ໃສ່ຜູ້ພິພາກສາ**

ນອກຈາກປະຕິບັດຕາມມາດຕາ 38 ຂອງກົດໝາຍສະບັບນີ້ແລ້ວ ໃນການດຳເນີນຄະດີໃສ່ຜູ້ພິພາກສານັ້ນ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຍັງຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ໃນໄລຍະດຳເນີນຄະດີ ການປະຕິບັດໜ້າທີ່ຂອງຜູ້ພິພາກສາຈະຖືກໂຈະຊົ່ວຄາວ ຕາມຂໍ້ຕົກລົງຂອງປະທານສານປະຊາຊົນທີ່ກ່ຽວຂ້ອງ. ຂໍ້ຕົກລົງ ໃຫ້ໂຈະການປະຕິບັດໜ້າທີ່ຂອງຜູ້ກ່ຽວນັ້ນ ມີຜົນບັງຄັບປະຕິບັດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ມາດຕາ 40 ການຟື້ນຟູຄືນ ການປະຕິບັດໜ້າທີ່ ຂອງຜູ້ພິພາກສາ**

ການປະຕິບັດໜ້າທີ່ ຂອງຜູ້ພິພາກສາ ທີ່ຖືກໂຈະຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້ ຈະໄດ້ຮັບການຟື້ນຟູຄືນ ເມື່ອສານຫາກໄດ້ຕັດສິນໃຫ້ຜູ້ກ່ຽວພົ້ນຂໍ້ກ່າວຫາ.

# ພາກທີ VIII

# ການຕິດຕາມກວດກາ ແລະ ການປະເມີນຜົນງານ

## ໝວດທີ 1

## ການຕິດຕາມກວດກາຜູ້ພິພາກສາ

**ມາດຕາ 41 ການຕິດຕາມກວດກາຜູ້ພິພາກສາ**

ການຕິດຕາມກວດກາຜູ້ພິພາກສາ ແມ່ນ ການຕິດຕາມກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ທາງດ້ານວິຊາການ ແລະ ການປະພຶດຂອງຜູ້ພິພາກສາ ໂດຍຄະນະກໍາມະການຕິດຕາມກວດກາ ຂອງສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ, ຄະນະປະຈໍາສະພາແຫ່ງຊາດ ຫຼື ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 42 ຄະນະກໍາມະການຕິດຕາມກວດກາ**

ຄະນະກໍາມະການຕິດຕາມກວດກາ ຖືກແຕ່ງຕັ້ງໂດຍປະທານສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍຄະນະກໍາມະການຕິດຕາມກວດກາ ຂອງສານປະຊາ ຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ.

ກ. ຄະນະກໍາມະການຕິດຕາມກວດກາ ຂອງສານປະຊາຊົນສູງສຸດ ປະກອບດ້ວຍ:

1. ຮອງປະທານສານປະຊາຊົນສູງສຸດ ເປັນປະທານ;
2. ຫົວໜ້າກົມຈັດຕັ້ງ-ພະນັກງານ ເປັນຮອງປະທານ;
3. ຫົວໜ້າກົມກວດກາ ເປັນກໍາມະການ;
4. ຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ ເປັນກໍາມະການ;
5. ຜູ້ຕາງໜ້າ ສະພາຜູ້ພິພາກສາ ຈໍານວນໜຶ່ງ ເປັນກໍາມະການ;
6. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ເປັນກໍາມະການ.

ຂ. ຄະນະກໍາມະການຕິດຕາມກວດກາ ຂອງສານປະຊາຊົນທ້ອງຖິ່ນ ປະກອບດ້ວຍ:

1. ປະທານສານປະຊາຊົນທີ່ກ່ຽວຂ້ອງ ເປັນປະທານ;
2. ຫົວໜ້າພະແນກຈັດຕັ້ງ ແລະ ກວດກາ ສານປະຊາຊົນທີ່ກ່ຽວຂ້ອງ ເປັນຮອງປະທານ;
3. ຜູ້ຕາງໜ້າຄະນະປະທານ ຂອງສານປະຊາຊົນທີ່ກ່ຽວຂ້ອງ ຈໍານວນໜຶ່ງ ເປັນກໍາມະການ;
4. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ສານປະຊາຊົນທີ່ກ່ຽວຂ້ອງ ເປັນກໍາມະການ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງຄະນະກໍາມະການຕິດຕາມກວດກາ**

ຄະນະກໍາມະການຕິດຕາມກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ອອກລະບຽບການ ກ່ຽວກັບການຕິດຕາມກວດກາ ການປະຕິບັດໜ້າທີ່ ແລະ ການປະພຶດຂອງຜູ້ພິພາກສາ;
2. ເປັນຜູ້ດໍາເນີນການຕິດຕາມກວດກາ ໃນການປະຕິບັດໜ້າທີ່ ແລະ ການປະພຶດ ຂອງຜູ້ພິພາກສາ;
3. ຕີລາຄາຄວາມສາມາດ ແຕ່ລະດ້ານໃນການດໍາເນີນຄະດີ ແລະ ການປະພຶດຂອງຜູ້ພິພາກສາ;

4. ສັງລວມບັນຊີລາຍຊື່ຜູ້ພິພາກສາ ທີ່ຕ້ອງບຳລຸງປົກລະດັບ ແລ້ວສົ່ງໃຫ້ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງປະທານສານປະຊາຊົນສູງສຸດ.

ການຕິດຕາມກວດກາ ຜູ້ພິພາກສາ ຕ້ອງດຳເນີນຢ່າງໜ້ອຍປີລະຄັ້ງ.

**ມາດຕາ 44 ຮູບການຕິດຕາມກວດກາ**

ການຕິດຕາມກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການຕິດຕາມກວດກາປົກກະຕິ ຊຶ່ງແມ່ນການຕິດຕາມກວດກາ ຕາມແຜນການທີ່ໄດ້ກຳນົດໄວ້;
2. ການຕິດຕາມກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງໄດ້ແຈ້ງໃຫ້ຜູ້ພິພາກສາທີ່ຖືກກວດການັ້ນຊາບ ກ່ອນລ່ວງໜ້າ;
3. ການກວດກາກະທັນຫັນ ຊຶ່ງແມ່ນການກວດກາ ໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ພິພາກສາທີ່ຖືກກວດການັ້ນຊາບລ່ວງໜ້າ.

## ໝວດທີ 2
## ການປະເມີນຜົນງານ ຂອງຜູ້ພິພາກສາ

**ມາດຕາ 45 ການປະເມີນຜົນງານ ຂອງຜູ້ພິພາກສາ**

ການປະເມີນຜົນງານ ຂອງຜູ້ພິພາກສາ ແມ່ນ ການປະເມີນກ່ຽວກັບການປະຕິບັດໜ້າທີ່ ແລະ ການປະພຶດຂອງຜູ້ພິພາກສາ ຊຶ່ງມີທັງການຍ້ອງຍໍ ແລະ ການລົງວິໄນ ຊຶ່ງດຳເນີນໂດຍຄະນະກຳມະການປະເມີນຜົນງານ.

**ມາດຕາ 46 ຄະນະກຳມະການປະເມີນຜົນງານ**

ຄະນະກຳມະການປະເມີນຜົນງານ ຖືກແຕ່ງຕັ້ງໂດຍປະທານສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ ຄະນະກຳມະການປະເມີນຜົນງານ ຂອງສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ.

ກ. ຄະນະກຳມະການປະເມີນຜົນງານ ຂອງສານປະຊາຊົນສູງສຸດ ປະກອບດ້ວຍ:

1. ປະທານສານປະຊາຊົນສູງສຸດ ເປັນປະທານ;
2. ຫົວໜ້າກົມຈັດຕັ້ງ-ພະນັກງານ ເປັນຮອງປະທານ;
3. ຫົວໜ້າກົມກວດກາ ເປັນກຳມະການ;
4. ຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ ເປັນກຳມະການ;
5. ຜູ້ຕາງໜ້າ ສະພາຜູ້ພິພາກສາ ຈຳນວນໜຶ່ງ ເປັນກຳມະການ;
6. ຫົວໜ້າຄະນະສານ ທີ່ກ່ຽວຂ້ອງ ເປັນກຳມະການ;
7. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ເປັນກຳມະການ.

ຂ. ຄະນະກຳມະການປະເມີນຜົນງານ ຂອງສານປະຊາຊົນທ້ອງຖິ່ນ ປະກອບດ້ວຍ:

1. ປະທານສານປະຊາຊົນທີ່ກ່ຽວຂ້ອງ ເປັນປະທານ;
2. ຫົວໜ້າຂະແໜງຈັດຕັ້ງ ແລະ ກວດກາ ສານປະຊາຊົນທີ່ກ່ຽວຂ້ອງ ເປັນຮອງປະທານ;

3. ຜູ້ຕາງໜ້າຄະນະປະທານ ຈຳນວນໜຶ່ງ ເປັນກຳມະການ;
4. ຜູ້ຕາງໜ້າ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນກຳມະການ;
5. ຄະນະຈັດຕັ້ງຂັ້ນແຂວງ ຫຼື ຂັ້ນເມືອງ ທີ່ກ່ຽວຂ້ອງ ເປັນກຳມະການ;
6. ຄະນະກວດກາຂັ້ນແຂວງ ຫຼື ຂັ້ນເມືອງ ທີ່ກ່ຽວຂ້ອງ ເປັນກຳມະການ;
7. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ສານປະຊາຊົນທີ່ກ່ຽວຂ້ອງ ເປັນກຳມະການ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປະເມີນຜົນງານ**

ຄະນະກຳມະການປະເມີນຜົນງານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າອອກລະບຽບການກ່ຽວກັບການປະເມີນຜົນງານ, ຍ້ອງຍໍ ແລະ ການລົງວິໄນ;
2. ດຳເນີນການປະເມີນຜົນງານ ແລະ ກວດກາ ຜູ້ມີຜົນງານ ເພື່ອຍ້ອງຍໍ ແລະ ຜູ້ລະເມີດ ເພື່ອລົງວິໄນ;
3. ຂຶ້ນບັນຊີ ແລະ ລາຍງານຜູ້ມີຜົນງານ ແລະ ຜູ້ລະເມີດ ເພື່ອສະເໜີໃຫ້ປະທານສານປະຊາຊົນ ທີ່ກ່ຽວຂ້ອງ ພິຈາລະນາຕາມແຕ່ລະກໍລະນີ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງປະທານສານປະຊາຊົນສູງສຸດ.

**ມາດຕາ 48 ການດຳເນີນການປະເມີນຜົນງານ**

ການປະເມີນຜົນງານ ແລະ ຍ້ອງຍໍ ໃຫ້ດຳເນີນຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ.

ການລົງວິໄນ ຂອງຜູ້ພິພາກສາ ໃຫ້ປະຕິບັດຄືກັນກັບການລົງວິໄນຂອງພະນັກງານ-ລັດຖະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

## ພາກທີ IX
## ການຮັບອຸດໜູນບຳນານ ແລະ ການສິ້ນສຸດ ການເປັນຜູ້ພິພາກສາ

**ມາດຕາ 49 ການຮັບອຸດໜູນບຳນານ**

ການຮັບອຸດໜູນບຳນານຂອງຜູ້ພິພາກສາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ຜູ້ພິພາກສາຂອງສານປະຊາຊົນ ອາດສືບຕໍ່ປະຕິບັດໜ້າທີ່ຂອງຕົນໄດ້ ແຕ່ອາຍຸບໍ່ໃຫ້ເກີນ 65 ປີ ແລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມຕ້ອງການ ຂອງການຈັດຕັ້ງ;
2. ມີຄວາມສະໝັກໃຈ;
3. ມີສຸຂະພາບດີ.

### ມາດຕາ 50 ການສິ້ນສຸດການເປັນຜູ້ພິພາກສາ

ການເປັນຜູ້ພິພາກສາ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການລາອອກ;
2. ການເສຍສັນຊາດລາວ;
3. ການປະລະໜ້າທີ່;
4. ການຖືກປົດຕຳແໜ່ງ ຫຼື ການຖືກໄລ່ອອກ;
5. ການເສຍກຳລັງແຮງງານ;
6. ການຮັບອຸດໜູນບຳນານ;
7. ການເສຍຊີວິດ.

## ພາກທີ X
## ເຄື່ອງແບບ, ກາໝາຍ ແລະ ບັດຂອງຜູ້ພິພາກສາ

### ມາດຕາ 51 ເຄື່ອງແບບຂອງຜູ້ພິພາກສາ

ເຄື່ອງແບບຂອງຜູ້ພິພາກສາ ມີ ເຄື່ອງແບບ ຊຸດບັ້ງບັນລັງຕັດສິນ ແລະ ຊຸດທາງການຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສານປະຊາຊົນ.

### ມາດຕາ 52 ກາໝາຍ ແລະ ບັດຂອງຜູ້ພິພາກສາ

ກາໝາຍຂອງຜູ້ພິພາກສາ ມີ ທະນູບ່າ, ອິນທະນູຄໍ, ປ້າຍຊື່ ແລະ ເຄື່ອງໝາຍສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສານປະຊາຊົນ.

ໃນການປະຕິບັດໜ້າທີ່ທາງການ ຜູ້ພິພາກສາ ມີບັດສະເພາະຂອງຕົນ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 53 ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ພິພາກສາ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ ເຮັດໃຫ້ການຕັດສິນ ແລະ ພິພາກສາຄະດີ ມີຄວາມຖືກຕ້ອງ ຍຸຕິທຳ ແລະ ຕັ້ງໜ້າພັດທະນາລະບົບສານປະຊາຊົນ ໃຫ້ມີປະສິດທິຜົນ, ໂປ່ງໃສ ແລະ ທັນສະໄໝ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 54 ມາດຕະການຕໍ່ຜູ້ລະເມີດ

ຜູ້ພິພາກສາ ທີ່ໄດ້ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ໂດຍເຈດຕະນາ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ຖືກດຳເນີນຄະດີ ແລະ ລົງໂທດ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 55 ການຈັດຕັ້ງປະຕິບັດ**

ລັດຖະບານ, ຄະນະປະຈໍາສະພາແຫ່ງຊາດ, ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ສານປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 56 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້